ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 072 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2026

ບົດບັນທຶກ
ກອງປະຊຸມສາມັນຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ
ປະຈຳປີ 2025

ກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ປະຈຳປີ 2025 ເຊິ່ງຕໍ່ໄປນີ້ເອີ້ນວ່າ "ກອງປະຊຸມ" ໄດ້ຈັດຂຶ້ນໃນເວລາ 9:00 ໂມງ ຂອງວັນພຸດ, ວັນທີ 29 ເມສາ 2026 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 6, ທະນາຄານຮ່ວມພັດທະນາ ມະຫາຊົນ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ທຄຮ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຮ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ: 50 ທ່ານ, ຜູ້ມອບສິດຈຳນວນ: 1 ທ່ານ, ຜູ້ລົງທະບຽນທາງອອນລາຍຈຳນວນ: 308 ທ່ານ ເຊິ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 702,901,700 ຮຸ້ນ, ນັບທັງຈຳນວນຮຸ້ນທີ່ຖືກມອບສິດ 30,359,975 ຮຸ້ນ, ບັນລຸອັດຕາສ່ວນ 93.72% ຂອງຈຳນວນຮຸ້ນ ທຄຮ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຮ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 47,098,300 ຮຸ້ນ ເທົ່າກັບ 6.28 % ຂອງຈຳນວນຮຸ້ນ ທຄຮ ທັງໝົດ.

ຄະນະປະທານ ກອງປະຊຸມ ປະກອບມີ:

1. ທ່ານ ວິໄລ ສີພະພອນ — ປະທານສະພາບໍລິຫານ, ເຮັດໜ້າທີ່ເປັນປະທານກອງປະຊຸມ;
2. ທ່ານ ນາງ ພອນສະໄໝ ສຸຂະຜົນ — ຮອງປະທານສະພາບໍລິຫານ;
3. ທ່ານ ສາຄອນ ຍໍພັນໄຊ — ຜູ້ອຳນວຍການ ທຄຮ, ສະມາຊິກສະພາບໍລິຫານ;
4. ທ່ານ ຄຳສິງ ສອນສິນມະວິງ — ສະມາຊິກສະພາບໍລິຫານ;
5. ທ່ານ ວິລັນເດດ ໄວຍະສົມສັກ — ສະມາຊິກສະພາບໍລິຫານ;
6. ທ່ານ ວິສຸດ ບົວສີສະອາດ — ສະມາຊິກສະພາບໍລິຫານ;
7. ທ່ານ ບຸນຊຸ່ມ ສີສະຫວັດ — ສະມາຊິກສະພາບໍລິຫານ ອິດສະລະ;
8. ທ່ານ ສຸກສະຫວັນ ມະນີວັນ — ສະມາຊິກສະພາບໍລິຫານ ອິດສະລະ;
9. ທ່ານ ປອ. ຈອມຄຳ ບຸບຜາລີວັນ — ສະມາຊິກສະພາບໍລິຫານ ອິດສະລະ.

ປະທານກອງປະຊຸມ ໄດ້ແນະນຳລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ, ຈາກນັ້ນກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະ.

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2024.

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຮ ໄດ້ລາຍງານ ໃຫ້ກອງປະຊຸມຮັບຊາບ ກ່ຽວກັບບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ປະຈຳປີ 2024 ຈັດຂຶ້ນໃນວັນທີ 09 ທັນວາ 2025 ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍສອດຄ່ອງຕາມລະບຽບທີ່ກ່ຽວຂ້ອງແລ້ວ, **ສະເໜີກອງປະຊຸມ ພິຈາລະນາຮັບຮອງເອົາບົດບັນທຶກກອງປະຊຸມ** ດັ່ງກ່າວ.

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາ ແຜນເພີ່ມທຶນຈົດທະບຽນ ໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ (Share Premium) ເພື່ອອອກຮຸ້ນລາງວັນ (Bonus Issue) ໃຫ້ແກ່ຜູ້ຖືຮຸ້ນເດີມຂອງ ທຄຮ.

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຮ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ການເພີ່ມທຶນໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ (Share Premium) ມີຈຸດປະສົງ ເພື່ອເພີ່ມທຶນຈົດທະບຽນຂອງ ທຄຮ ໃຫ້ສອດຄ່ອງກັບມາດຕາ 13 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023 ແລະ ຂໍ້ຕົກລົງວ່າດ້ວຍການເພີ່ມທຶນຈົດທະບຽນ ແລະ ເງື່ອນໄຂທຶນຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ສະບັບເລກທີ 45/ນຍ, ລົງວັນທີ 11 ເມສາ 2025 ເຊິ່ງກຳນົດໃຫ້ທະນາຄານ ຕ້ອງມີທຶນຈົດທະບຽນຂັ້ນຕ່ຳບໍ່ໃຫ້ຫຼຸດ 1,000,000,000,000 (ໜຶ່ງພັນຕື້) ກີບ.

ທຶນຈົດທະບຽນ ເດີມ:	750,000,000,000 ກີບ
Share premium:	568,616,128,596 ກີບ
ສ່ວນເພີ່ມມູນຄ່າຮຸ້ນທີ່ນຳໄປໃຊ້ເພີ່ມທຶນ:	375,000,000,000 ກີບ
ທຶນຈົດທະບຽນ ຈະເພີ່ມເປັນ:	1,125,000,000,000 ກີບ
ຈຳນວນຮຸ້ນປັນຜົນທີ່ອອກໃໝ່ທັງໝົດ:	375,000,000 ຮຸ້ນ
ສັດສ່ວນການຈັດສັນຮຸ້ນລາງວັນ:	2 ຮຸ້ນເດີມຕໍ່ 1 ຮຸ້ນໃໝ່ (2:1)

ຈຳນວນຮຸ້ນທີ່ສາມາດຊື້ຂາຍໄດ້	ກ່ອນການອອກຮຸ້ນລາງວັນ	ຫຼັງການອອກຮຸ້ນລາງວັນ
	67,800,500 ຮຸ້ນ	101,700,750 ຮຸ້ນ

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມພິຈາລະນາ ແລະ ຮັບຮອງແຜນການເພີ່ມທຶນດັ່ງກ່າວ ພ້ອມທັງມອບອຳນາດໃຫ້ສະພາບໍລິຫານ ດຳເນີນການໃນຂັ້ນຕອນຕໍ່ໄປ ເປັນຕົ້ນ ກຳນົດມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນທີ່ໄດ້ຮັບການຈັດສັນ, ການຂໍອະນຸຍາດເພີ່ມທຶນນຳພາກສ່ວນທີ່ກ່ຽວຂ້ອງ, ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ, ການຂໍຈົດທະບຽນຮຸ້ນ, ຂຶ້ນທະບຽນ ແລະ ຮັບຝາກຮຸ້ນ ແລະ ອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສຄຄຊ ແລະ ຕລຊລ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,898,700 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 3,000 ສຽງ, ເທົ່າກັບ 0.0004% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາ ຜົນການດຳເນີນງານ ແລະ ບົດລາຍງານຖານະການເງິນ ປະຈຳປີ 2025 ຂອງ ທຄຣ.

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຣ ໄດ້ລາຍງານ ໃຫ້ກອງປະຊຸມຮັບຊາບ ກ່ຽວກັບຜົນການດຳເນີນທຸລະກິດປະຈຳປີ 2025 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC ແລະ ຮັບຮອງຈາກສະພາບໍລິຫານ ທຄຣ ມີ ດັ່ງນີ້:

- ຍອດຊັບສິນ: 43,783,399,339,871 ກີບ, ເພີ່ມຂຶ້ນ 32% ທຽບໃສ່ປີ 2024;
- ຍອດເງິນຝາກ: 37,439,880,983,222 ກີບ, ເພີ່ມຂຶ້ນ 29% ທຽບໃສ່ປີ 2024;
- ຍອດເງິນປ່ອຍກູ້ທັງໝົດ: 25,021,933,188,684 ກີບ, ເພີ່ມຂຶ້ນ 22% ທຽບໃສ່ປີ 2024;
- ອັດຕາສ່ວນ NPL: 0.64%;
- ກຳໄລສຸດທິ: 718,078,219,515 ກີບ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,600 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 100 ສຽງ, ເທົ່າກັບ 0.000014% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດ ປີ 2026.

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຣ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດ ປະຈຳປີ 2026 ເຊິ່ງມີຄາດໝາຍຕົວເລກສູ້ຊົນ ມີດັ່ງນີ້:

- ຍອດຊັບສິນທັງໝົດ: 53,000,000,000,000 ກີບ;
- ທຶນຈົດທະບຽນ: 1,000,000,000,000 ກີບ;
- ລາຍຮັບທັງໝົດ: 57,568,270,000,000 ກີບ;
- ລາຍຈ່າຍທັງໝົດ: 56,471,130,000,000 ກີບ;
- ກຳໄລກ່ອນອາກອນ: 1,261,081,000,000 ກີບ;
- ກຳໄລສຸດທິ: 1,097,140,000,000 ກີບ;
- ຈຳນວນບັນຊີເງິນຝາກ: 130,000 ບັນຊີ;
- ຈຳນວນເງິນຝາກ: 8,000,000,000,000 ກີບ;
- ລະດົມທຶນດອກເບ້ຍຕ່ຳ: 2,000,000,000,000 ກີບ;
- ຈຳນວນເງິນປ່ອຍກູ້: 6,400,000,000,000 ກີບ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາ ການລົງທຶນໃນກອງທຶນສ່ວນບຸກຄົນ.

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຣ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາ ການລົງທຶນໃນກອງທຶນສ່ວນບຸກຄົນ ມູນຄ່າ 250,000,000,000 ກີບ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ ໃນວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມ ດັ່ງນີ້:

- **ທ່ານ ນາງ ກິນນາລອນ ຈັນທະວົງ:** ນຳໃຊ້ເງິນທຶນສ່ວນໃດຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ ໄປລົງທຶນ ?
- **ທ່ານ ສາມຄອນ ຍໍພັນໄຊ,** ຜູ້ອຳນວຍການ ທຄຮ: ນຳໃຊ້ເງິນທຶນຈາກເງິນຝາກຂອງລູກຄ້າ, ເງິນຈາກການຂາຍຮຸ້ນ ແລະ ເງິນຈາກການກູ້ຢືມມາ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,873,600 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 28,100 ສຽງ, ເທົ່າກັບ 0.0039% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາ ການຮ່ວມທຶນສ້າງຕັ້ງບໍລິສັດ ລາວ ບໍລິຫານຊັບສິນ ຈຳກັດ (Lao Asset Management Company).

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຮ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາ ການຮ່ວມທຶນສ້າງຕັ້ງບໍລິສັດ ລາວ ບໍລິຫານຊັບສິນ ຈຳກັດ; ມີທຶນຈົດທະບຽນ 100,000,000,000 ກີບ, ຮຸ້ນມີທັງໝົດ 1,000,000 ຮຸ້ນ, ແຕ່ລະຮຸ້ນມີມູນຄ່າ 100,000 ກີບ, ເປັນຮຸ້ນສາມັນ.

1) ບໍລິສັດ ເອັດເອັມຈີ ກຣຸບ ຈຳກັດຜູ້ດຽວ, ຈຳນວນຮຸ້ນສາມັນ 700,000 ຮຸ້ນ, ສັດສ່ວນການຖືຮຸ້ນ 70%.
2) ທະນາຄານຮ່ວມພັດທະນາ ມະຫາຊົນ, ຈຳນວນຮຸ້ນ 300,000 ຮຸ້ນ, ສັດສ່ວນການຖືຮຸ້ນ 30%.

ສຳນັກງານຕັ້ງຢູ່ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາ ການຮ່ວມທຶນສ້າງຕັ້ງບໍລິສັດ ລາວ ບໍລິຫານຊັບສິນ ຈຳກັດ ມູນຄ່າ 30,000,000,000 ກີບ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ ໃນວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມ ດັ່ງນີ້:

- **ທ່ານ ພອນວິນາ ສົມວັນວິຈິດ**: ສ້າງຕັ້ງບໍລິສັດ ລາວ ບໍລິຫານຊັບສິນ ຈຳກັດ ເປົ້າໝາຍແມ່ນເພື່ອຫຍັງ? ແລະ ແຜນລາຍຮັບປີ 2026 ຈະເພີ່ມຂຶ້ນບໍ ?
- **ທ່ານ ສາຄອນ ຍໍພັນໄຊ**, ຜູ້ອຳນວຍການ ທຄຮ: ສາມາດສະໜອງຂໍ້ມູນ ເປັນລາຍລັກອັກສອນ ໃຫ້ຜູ້ຖືຮຸ້ນ ທີ່ມີຄວາມສົນໃຈ.
  ຍັງບໍ່ສາມາດເວົ້າໄດ້ວ່າ ຈະໄດ້ລາຍຮັບເທົ່າໃດ ແລະ ຈະປັນຜົນເທົ່າໃດ ເພາະປິດລາຍງານຖານະການເງິນ ປະຈຳປີ ທີ່ຈະສື່ສານຕໍ່ມວນຊົນ ຕ້ອງໄດ້ຜ່ານການກວດສອບກ່ອນ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,885,200 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 16,500 ສຽງ, ເທົ່າກັບ 0.0023% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ພິຈາລະນາ ແລະ ຮັບຮອງເອົາ ແຜນການຈ່າຍເງິນປັນຜົນ ປີ 2025 ຂອງ ທຄຮ.

ທ່ານ ສາຄອນ ຍໍພັນໄຊ, ທຄຮ ສະເໜີກອງປະຊຸມພິຈາລະນາ ແລະ ຮັບຮອງເອົາ ການຈັດສັນກຳໄລຫຼັງອາກອນ ປະຈຳປີ 2025 ເພື່ອຈ່າຍເຂົ້າຄັງຕ່າງໆ ຕາມລະບຽບການ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:

- ກຳໄລສະສົມສຸດທິ ຫຼັງການກວດສອບຈາກພາຍນອກ ຕາມມາດຕະຖານ LAS ປີ 2025: 718,078,219,515 ກີບ;
- ຄັງສຳຮອງຕາມກົດໝາຍ: 71,807,821,952 ກີບ;
- ຄັງຂະຫຍາຍອື່ນໆ: 46,270,397,564 ກີບ;
- ຈ່າຍເງິນປັນຜົນ: 800 ກີບ/ຮຸ້ນ;
- ລວມມູນຄ່າເງິນປັນຜົນທັງໝົດ: 600,000,000,000 ກີບ;
- ມື້ຈ່າຍເງິນປັນຜົນ: 25 ພຶດສະພາ 2026.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
- **ເຫັນດີ**: ຈຳນວນ 702,901,200 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 500 ສຽງ, ເທົ່າກັບ 0.00007% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງເອົາ ການແຕ່ງຕັ້ງບໍລິສັດ ກວດສອບບັນຊີ ພາຍນອກ ປະຈຳປີ 2026.

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຣ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາ ການຄັດເລືອກ ບໍລິສັດກວດສອບພາຍນອກ ເພື່ອດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2026, ທຄຣ ເຫັນດີເລືອກເອົາບໍລິສັດ ERNST & YOUNG (EY) ເປັນຜູ້ດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2026.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
- **ເຫັນດີ**: ຈຳນວນ 702,900,500 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 1,200 ສຽງ, ເທົ່າກັບ 0.0001% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງໂຄງຮ່າງການຈັດຕັ້ງຂອງ ທຄຣ.

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຣ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງໂຄງຮ່າງການຈັດຕັ້ງຂອງ ທຄຣ, ເນື່ອງຈາກ ໄດ້ເພີ່ມ 1 ພະແນກໃໝ່ ຄື: ພະແນກ ໂຄສະນາປະຊາສຳພັນ, ຈາກເດີມ ມີ 13 ພະແນກ ລວມເປັນ 14 ພະແນກ ເພື່ອປັບປຸງປະສິດທິພາບ ໃນການດຳເນີນງານ ແລະ ໃຫ້ສອດຄ່ອງກັບແຜນຍຸດທະສາດທາງທຸລະກິດ ໃນປັດຈຸບັນ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
- **ເຫັນດີ**: ຈຳນວນ 702,901,000 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 700 ສຽງ, ເທົ່າກັບ 0.0001% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 10: ພິຈາລະນາ ແລະ ຮັບຮອງເອົາ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ສະບັບປັບປຸງ).

ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຮ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງກົດລະບຽບຄັ້ງນີ້ ແມ່ນອີງຕາມການເພີ່ມທຶນຈົດທະບຽນຂອງ ທຄຮ, ເພີ່ມຄຳສັບ ແລະ ໂຄງປະກອບຂອງຜູ້ຖືຮຸ້ນ ໃຫ້ສອດຄ່ອງກັບລະບຽບການ ໂດຍລາຍລະອຽດມາດຕາປັບປຸງ ມີດັ່ງນີ້:

<table>
<tr><td>ມາດຕາ (ປັບປຸງ)</td><td>ລາຍອະລຽດທີ່ປັບປຸງ</td></tr>
<tr><td>ມາດຕາ 2: ການອະທິບາຍຄຳສັບ</td><td>ເພີ່ມໃໝ່ 03 ຄຳສັບ: ໃບລອມຮຸ້ນ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ.</td></tr>
<tr><td>ມາດຕາ 9: ທຶນຈົດທະບຽນ</td><td>ປັບມາເປັນ 750,000,000,000 ກີບ</td></tr>
<tr><td>ມາດຕາ 11: ຮຸ້ນ</td><td>750,000,000,000 ຮຸ້ນ</td></tr>
<tr><td>ມາດຕາ 14: ໂຄງປະກອບຂອງຜູ້ຖືຮຸ້ນ</td><td>
<table>
<tr><th>ລຳດັບ</th><th>ຜູ້ຖືຮຸ້ນ</th><th>ຈຳນວນຮຸ້ນ</th><th>ມູນຄ່າຮຸ້ນ (ກີບ)</th><th>ອັດຕາສ່ວນການຖືຮຸ້ນ</th></tr>
<tr><td>1</td><td>ບໍລິສັດ ເອັດເອັມຈີ ກຣຸບ ຈຳກັດຜູ້ດຽວ</td><td>634,186,134</td><td>951,279,202</td><td>84.558%</td></tr>
<tr><td>2</td><td>ທ່ານ ນາງ ກັນຍາ ພິຈິດ</td><td>30,359,975</td><td>45,539,962</td><td>4.047%</td></tr>
<tr><td>3</td><td>ທ່ານ ພຸໄຊຊະນະ ໄຊສົມບັດ</td><td>10,119,991</td><td>15,179,986</td><td>1.349%</td></tr>
<tr><td>4</td><td>ຜູ້ຖືຮຸ້ນທີ່ຊື້ຮຸ້ນຜ່ານຕະຫຼາດຫຼັກຊັບລາວ</td><td>75,333,900</td><td>75,333,900,000</td><td>10.044%</td></tr>
<tr><td colspan="2">ລວມທັງໝົດ</td><td>750,000,000</td><td>1,125,000,000</td><td>100%</td></tr>
</table>
</td></tr>
<tr><td>ມາດຕາ 48: ຜົນສັກສິດ</td><td>ເດີມມີ 11 ໝວດ, 84 ມາດຕາ; ປັບປຸງໃໝ່ມີ 12 ໝວດ, 84 ມາດຕາ.
ປ່ຽນແທນ ກົດລະບຽບ ສະບັບເລກທີ 040/ທຄຮ, ລົງວັນທີ 13 ກຸມພາ 2026.</td></tr>
</table>

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ ໃນວາລະນີ້.
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,600 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 100 ສຽງ, ເທົ່າກັບ 0.00001% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກກອງປະຊຸມໄດ້ດຳເນີນຄົບຖ້ວນທຸກວາລະແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ມີຄຳເຫັນ ຫຼື ຄຳຖາມເພີ່ມເຕີມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດປິດກອງປະຊຸມ ໃນເວລາ 11:30 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ | **ຜູ້ທັນທຶກ**

ທ່ານ ວິໄລ ສີພະພອນ | ທ່ານ ດີອຢ່າງ ໝາວຕູ້